**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງ ສະຫວັນນະເຂດ
ເຈົ້າແຂວງ

ເລກທີ 2010 /ຈຂ.ສຂ
ວັນທີ 06 NOV 2020

# ຂໍ້ຕົກລົງ
# ວ່າດ້ວຍການຄຸ້ມຄອງການຂຸດຄົ້ນ ດິນດຳ-ດິນແດງ
# ພາຍໃນແຂວງສະຫວັນນະເຂດ

- ອີງຕາມ ກົດໝາຍ ວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015;
- ອີງຕາມ ກົດໝາຍ ວ່າດ້ວຍແຮ່ທາດ ສະບັບເລກທີ 31 /ສພຊ, ລົງວັນທີ 03 ພະຈິກ2017;
- ອີງຕາມ ມະຕິກອງປະຊຸມສະພາປະຊາຊົນແຂວງສະບັບເລກທີ 14/ສພຂ.ສຂ, ລົງວັນທີ 03 ກຸມພາ 2020 ກ່ຽວກັບ ການຮັບຮອງເອົາຂໍ້ຕົກລົງຂອງ ທ່ານເຈົ້າແຂວງໆສະຫວັນນະເຂດ ວ່າດ້ວຍ ການຄຸ້ມຄອງການຂຸດຄົ້ນ ດິນດຳ-ດິນແດງ ພາຍໃນແຂວງສະຫວັນນະເຂດ.

## ເຈົ້າແຂວງໆສະຫວັນນະເຂດ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ກຳນົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການຄຸ້ມຄອງ, ຕິດຕາມ ກວດກາການເຄື່ອນໄຫວວຽກງານການຂຸດຄົ້ນ ດິນດຳ-ດິນແດງ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ເພື່ອ ແນໃສ່ການປົກປັກຮັກສາສະພາບແວດລ້ອມ, ຄວາມສົມດຸນທາງດ້ານປະລິມານ ແລະ ຄຸນນະພາບ ຂອງ ດິນດຳ-ດິນແດງ ໃຫ້ດຳເນີນໄປຕາມຫຼັກການ, ເຕັກນິກ ແລະ ໄດ້ຮັບອະນຸຍາດຢ່າງຖືກຕ້ອງຕາມກົດໝາຍ ແລະ ລະບຽບການ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງແຂວງສະຫວັນນະເຂດ ຕາມທິດສີຂຽວ ແລະ ຍືນຍົງ.

### ມາດຕາ 2 ການຄຸ້ມຄອງການຂຸດຄົ້ນ ດິນດຳ-ດິນແດງ

ການຄຸ້ມຄອງການຂຸດຄົ້ນ ດິນດຳ-ດິນແດງ ແມ່ນການຄຸ້ມຄອງ, ຕິດຕາມກວດກາຂັ້ນຕອນການອອກ ອະນຸຍາດ, ການສຳຫຼວດ, ການຂຸດຄົ້ນ, ການຂົນສົ່ງ ແລະ ການນຳໃຊ້ດິນດຳ-ດິນແດງ ພາຍໃນແຂວງໃຫ້ ເກີດປະໂຫຍດສູງສຸດຕາມແນວທາງນະໂຍບາຍຂອງພັກ, ກົດໝາຍ ແລະ ລະບຽບການ ທີ່ລັດໄດ້ວາງອອກ ໃນແຕ່ລະໄລຍະ ປະກອບສ່ວນໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມຂອງແຂວງ.

**ມາດຕາ 3 ອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍດັ່ງນີ້:

1. **ການຄຸ້ມຄອງ** ໝາຍເຖິງ ການຕິດຕາມ, ການກວດກາ, ການຄວບຄຸມ, ການແນະນຳກ່ຽວກັບລະບຽບການ, ມາດຕະຖານເຕັກນິກຂອງຝ່າຍຄຸ້ມຄອງຕໍ່ກັບຜູ້ປະກອບການເພື່ອໃຫ້ໄດ້ຕາມມາດຖານເງື່ອນໄຂ;

2. **ການເກັບກຳຂໍ້ມູນ** ໝາຍເຖິງ ການດຳເນີນເກັບກຳຂໍ້ມູນແຫຼ່ງພື້ນທີ່ ທີ່ມີດິນດຳ-ດິນແດງ ຢູ່ພາກສະໜາມເພື່ອມາສຶກສາສະພາບແວດລ້ອມ, ເກັບຕົວຢ່າງມາວິໄຈບ່ອນທີ່ຈະດຳເນີນການຂຸດຄົ້ນ;

3. **ການສຳຫຼວດ** ໝາຍເຖິງ ການສຶກສາໂຄງສ້າງທາງດ້ານທໍລະນີສາດແຫຼ່ງດິນດຳ-ດິນແດງ, ຊຶ່ງປະກອບດ້ວຍວຽກງານທໍລະນີສາດ ເພື່ອສັງລວມຕີລາຄາປະລິມານ ແລະ ຄຸນນະພາບຂອງດິນດຳ-ດິນແດງ;

4. **ການຂຸດຄົ້ນ** ໝາຍເຖິງ ການບຸກເບີກ, ການຈົກ, ການຕັກ ແລະ ວິທີການອື່ນໆ ເພື່ອເອົາດິນດຳ-ດິນແດງຕາມໜ້າດິນ ແລະ ຢູ່ພື້ນດິນຂຶ້ນມານຳໃຊ້;

5. **ດິນດຳ** ໝາຍເຖິງ ດິນທີ່ເກີດຂຶ້ນຕາມທຳມະຊາດ, ຈາກການທັບຖົມຂອງຊາກພືດ, ຊາກສັດເສດຕະກອນສານອິນຊີ, ຫີນ ແລະ ແຮ່ ທີ່ຜ່ານຂະບວນການຜຸພັງ, ແຕ່ບາງກໍລະນີສີຂອງດິນອາດຈະເປັນຜົນມາຈາກອິດທິພົນຂອງປັດໄຈການເກີດຂອງດິນອື່ນໆ;

6. **ດິນແດງ** ໝາຍເຖິງ ດິນທີ່ເປັນສີແດງ ມີສີອັອກໄຊຂອງເຫຼັກ ແລະ ອາລູມີນຽມທີ່ສະແດງເຖິງການພັດທະນາການສູງ, ຜ່ານຂະບວນການຜຸພັງລະລາຍຕໍ່ມາເປັນເວລາດົນນານແລ້ວ, ເປັນດິນທີ່ມີການດູດຊຶມນ້ຳໄດ້ດີ, ແຕ່ຈະມີຄວາມອຸດົມສົມບູນຕ່ຳ ຍ້ອນວ່າເປັນດິນທີ່ມີອັອກໄຊຂອງເຫຼັກ ແລະ ອາລູມີນຽມປະປົນຢູ່ນຳ;

7. **ປະລິມານ** ໝາຍເຖິງ ບໍລິມາດສະສົມຂອງດິນດຳ-ດິນແດງ ທີ່ຢູ່ໃນຂອບເຂດພື້ນທີ່ແຫຼ່ງດິນດຳ-ດິນແດງທີ່ໄດ້ຜ່ານການເກັບກຳຂໍ້ມູນ ແລະ ສຳຫຼວດມາແລ້ວ;

8. **ຄຸນນະພາບ** ໝາຍເຖິງ ຄຸນລັກສະນະທາງດ້ານເຄມີ ແລະ ຟີຊິກຂອງແຕ່ລະຊັ້ນ ຂອງດິນດຳ-ດິນແດງເຊິ່ງປະກອບມີຄວາມຊຸ່ມຊື່ນ, ສີ ແລະ ກິ່ນ.

**ມາດຕາ 4 ນະໂຍບາຍຂອງລັດ**

ອົງການປົກຄອງແຂວງຊຸກຍູ້, ສົ່ງເສີມໃຫ້ບຸກຄົນ, ນິຕິບຸກຄົນ, ນັກທຸລະກິດທຸກໆພາກສ່ວນພາຍໃນປະເທດ ອຳນວຍຄວາມສະດວກໃນການຂຶ້ນທະບຽນ, ການຈັດສັນທີ່ດິນໃຫ້ສຳປະທານເພື່ອເຂົ້າຮ່ວມ ແລະ ປະກອບສ່ວນໃນການຄຸ້ມຄອງການຂຸດຄົ້ນ ດິນດຳ-ດິນແດງ ໄດ້ເຄື່ອນໄຫວໃຫ້ຖືກຕ້ອງ ສອດຄ່ອງຕາມລະບຽບກົດໝາຍ ແລະ ນິຕິກຳໃຕ້ກົດໝາຍທີ່ກ່ຽວຂ້ອງທີ່ໄດ້ກຳນົດໄວ້;

ອົງການປົກຄອງແຂວງປົກປ້ອງສິດຜົນປະໂຫຍດຂອງຜູ້ໄດ້ຮັບອະນຸຍາດການຂຸດຄົ້ນ ດິນດຳ-ດິນແດງໃຫ້ຖືກຕ້ອງ ແລະ ສອດຄ່ອງຕາມລະບຽບກົດໝາຍວາງອອກ.

**ມາດຕາ 5 ຫຼັກການເຄື່ອນໄຫວ**

ການຂຸດຄົ້ນ ດິນດຳ-ດິນແດງ ໃຫ້ປະຕິບັດຕາມຫຼັກການດັ່ງນີ້:

1. ສອດຄ່ອງກັບກົດໝາຍ, ລະບຽບການ, ແຜນຍຸດທະສາດ ແລະ ແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງໃນແຕ່ລະໄລຍະ;

2. ຮັບປະກັນຄວາມສອດຄ່ອງ ກັບຄວາມເປັນຈິງຂອງການຈຳໜ່າຍ ແລະ ການບໍລິການ, ການນຳໃຊ້ດິນດຳ-ດິນແດງ ຖືກຕ້ອງຕາມຈຸດປະສົງ ແລະ ເປົ້າໝາຍ, ຮັບປະກັນຄວາມປອດໄພ ພ້ອມທັງປົກປັກຮັກສາສະພາບແວດລ້ອມ;

3. ຮັບປະກັນການປະກອບສ່ວນໃຫ້ແກ່ການພັດທະນາໂຄງລ່າງພື້ນຖານ, ຖືກຕ້ອງ, ເປັນລະບຽບຮຽບຮ້ອຍ, ສະດວກກົມກຽວມີສ່ວນຮ່ວມຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງໃນທົ່ວສັງຄົມ;

4. ຮັບປະກັນຄວາມສະເໝີພາບ, ຄວາມໂປ່ງໃສ, ເປີດເຜີຍ, ຍຸຕິທຳ ແລະ ສາມາດກວດສອບໄດ້;

5. ຮັບປະກັນການປະສານສົມທົບ ແລະ ການມີສ່ວນຮ່ວມທຸກຂະແໜງການ ແລະ ສັງຄົມ.

**ມາດຕາ 6 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທຸກພາກສ່ວນ ທີ່ເຄື່ອນໄຫວດຳເນີນທຸລະກິດກ່ຽວກັບການຂຸດຄົ້ນ ດິນດຳ-ດິນແດງ ພາຍໃນແຂວງສະຫວັນນະເຂດ.

## ໝວດທີ 2
## ຂອບເຂດການຄຸ້ມຄອງພື້ນທີ່ການຂຸດຄົ້ນ ດິນດຳ-ດິນແດງ

**ມາດຕາ 7 ຂອບເຂດການຄຸ້ມຄອງພື້ນທີ່ການຂຸດຄົ້ນ ດິນດຳ-ດິນແດງ**

ການຄຸ້ມຄອງການຂຸດຄົ້ນແຫຼ່ງດິນດຳ-ດິນແດງ ຕ້ອງດຳເນີນຢູ່ໃນຂອບເຂດພື້ນທີ່ຂອງແຂວງສະຫວັນນະເຂດຕາມເນື້ອທີ່, ຄວາມເລິກ ແລະ ບໍລິມາດ ທີ່ໄດ້ກຳນົດໄວ້ດັ່ງນີ້:

- ເນື້ອທີ່ ບໍ່ເກີນ ສີ່ ເຮັກຕາ;
- ບໍລິມາດ ໜຶ່ງແສນ ແມັດກ້ອນລົງມາ;
- ດິນດຳຄວາມເລິກບໍ່ເກີນ ສາມ ແມັດ;
- ດິນແດງ ຄວາມເລິກບໍ່ເກີນ ສິບ ແມັດ;

ສ່ວນກຳມະວິທີການຂຸດຄົ້ນຕ້ອງໄດ້ຜ່ານການຮັບຮອງຈາກຂະແໜງການພະລັງງານ ແລະ ບໍ່ແຮ່.

**ມາດຕາ 8 ເຂດສະຫງວນການຂຸດຄົ້ນ ດິນດຳ-ດິນແດງ**

ເຂດທີ່ບໍ່ອະນຸຍາດໃຫ້ຂຸດຄົ້ນ ດິນດຳ-ດິນແດງ ປະກອບມີ: ເຂດສະຫງວນຂອງລັດ, ເຂດທີ່ເປັນ ແຫຼ່ງທ່ອງທ່ຽວ, ແຫຼ່ງວັດຖຸບູຮານ, ສະຖານທີ່ສຳຄັນທາງດ້ານປະຫວັດສາດ, ເຂດອະນຸລັກ, ເຂດທີ່ມີແຮ່ທາດ ທີ່ເປັນເສດຖະກິດ, ເຂດສານເຄມີເປັນພິດ, ເຂດທາດເບື່ອ, ເຂດແຄມແມ່ນ້ຳຂອງ ແລະ ສາຍນ້ຳອື່ນໆ ຕ້ອງມີໄລຍະຫ່າງແຕ່ ຫ້າຮ້ອຍ ແມັດຂຶ້ນໄປ.

## ໝວດທີ 3
## ການອະນຸຍາດຂຸດຄົ້ນ ດິນດຳ-ດິນແດງ

**ມາດຕາ 9 ການຂໍອະນຸຍາດຂຸດຄົ້ນ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງພາຍໃນ ສປປ ລາວ ທີ່ມີຈຸດປະສົງດຳເນີນກິດຈະການຂຸດຄົ້ນດິນດຳ-ດິນແດງ ຕ້ອງໄດ້ປະກອບເອກະສານ ສະເໜີຫາ ພະແນກພະລັງງານ ແລະ ບໍ່ແຮ່ແຂວງ, ຫ້ອງການພະລັງງານ ແລະ ບໍ່ແຮ່ເມືອງ, ນະຄອນ ຕາມແຕ່ລະຂັ້ນຕອນ.

**ມາດຕາ 10 ການປະກອບເອກະສານຂໍອະນຸຍາດຂຸດຄົ້ນ**

ເອກະສານທີ່ປະກອບໃນການຂໍອະນຸຍາດຂຸດຄົ້ນ ດິນດຳ-ດິນແດງ ມີດັ່ງນີ້:

1. ໃບຄຳຮ້ອງຂໍອະນຸຍາດຂຸດຄົ້ນຕ້ອງມີຊື່ແຈ້ງຂອງກິດຈະການ;
2. ໃບຢັ້ງຢືນທີ່ຢູ່ ຫຼື ສຳເນົາສຳມະໂນຄົວ ຫຼື ສຳເນົາບັດປະຈຳຕົວ;
3. ສຳເນົາໃບທະບຽນວິສາຫະກິດ (ກໍລະນີຈົດທະບຽນວິສາຫະກິດແລ້ວ);
4. ສຳເນົາເອກະສານຕ່າງໆກ່ຽວກັບການນຳໃຊ້ທີ່ດິນ;
5. ແຜນຟື້ນຟູເນື້ອທີ່ ແລະ ການປິດບໍ່;
6. ແຜນທີ່ສະແດງຈຸດທີ່ຕັ້ງ ແລະ ລາຍລະອຽດຂອງພື້ນທີ່ຂຸດຄົ້ນ;
7. ແຜນດຳເນີນງານ, ກຳມະວິທີການຂຸດຄົ້ນ, ບັນຊີພາຫະນະກົນຈັກ ແລະ ວິຊາການ;

8. ເອກະສານຢັ້ງຢືນກ່ຽວກັບແຫຼ່ງທຶນ (ໃບຢັ້ງຢືນຖານະການເງິນ)
9. ບົດບັນທຶກເຫັນດີ ລະຫວ່າງ ຜູ້ປະກອບການກັບເຈົ້າຂອງກຳມະສິດທີ່ດິນ.

**ມາດຕາ 11 ການອະນຸຍາດໃຫ້ສຳປະທານເນື້ອທີ່ຂຸດຄົ້ນ ດິນດຳ-ດິນແດງ**

ເຈົ້າແຂວງ, ເຈົ້າເມືອງ ແລະ ເຈົ້ານະຄອນ ເປັນຜູ້ພິຈາລະນາອອກຂໍ້ຕົກລົງ ອະນຸມັດເນື້ອທີ່ສຳປະທານຂຸດຄົ້ນ ດິນດຳ-ດິນແດງ ຕາມການສະເໜີຂອງພະແນກພະລັງງານ ແລະ ບໍ່ແຮ່ແຂວງ, ຫ້ອງການພະລັງງານ ແລະ ບໍ່ແຮ່ເມືອງ ແລະ ນະຄອນ ເຊິ່ງມີກຳນົດເວລາບໍ່ເກີນ ຫ້າ ປີ;

ພະແນກພະລັງງານ ແລະ ບໍ່ແຮ່ແຂວງ, ຫ້ອງການພະລັງງານ ແລະ ບໍ່ແຮ່ເມືອງ, ນະຄອນ ພິຈາລະນາການອອກໃບອະນຸຍາດຂຸດຄົ້ນ, ສາມາດຕໍ່ໄດ້ແຕ່ລະປີ ຕາມເງື່ອນໄຂຂອງຜູ້ປະກອບການ ແລະ ຕາມການຕີລາຄາການຈັດຕັ້ງປະຕິບັດ ຂອງຂະແໜງການທີ່ກ່ຽວຂ້ອງ.

**ຂັ້ນຕອນການຄົ້ນຄວ້າ ແລະ ການອອກອະນຸຍາດຂຸດຄົ້ນ ດິນດຳ-ດິນແດງ:**

1. ຜູ້ປະກອບການຕ້ອງໄດ້ປະກອບເອກະສານໃຫ້ຄົບຖ້ວນ, ຖືກຕ້ອງຕາມທີ່ໄດ້ລະບຸໄວ້ໃນມາດຕາ 10 ຂອງຂໍ້ຕົກລົງສະບັບນີ້;
2. ຜູ້ປະກອບການລົງກວດກາພື້ນທີ່ເພື່ອເກັບກຳຂໍ້ມູນທີ່ຈະຂຸດຄົ້ນ, ພ້ອມທັງເຮັດບົດບັນທຶກພາກສະໜາມຮ່ວມກັບຂະແໜງການທີ່ກ່ຽວຂ້ອງ, ບົນພື້ນຖານການກຳນົດຂອບເຂດ ແລະ ລະບຽບຫຼັກການ;
3. ເມື່ອເຫັນວ່າເອກະສານພ້ອມກັບການໄປສຳຫຼວດຂໍ້ມູນໄດ້ສອດຄ່ອງກັບແລ້ວ ຈຶ່ງອອກໃບອະນຸຍາດຂຸດຄົ້ນໃຫ້ພາຍໃນກຳນົດ ຫ້າ ວັນທາງລັດຖະການນັບແຕ່ມື້ຮັບເອກະສານຂໍອະນຸຍາດ.

**ມາດຕາ 12 ເງື່ອນໄຂການຕໍ່ໃບອະນຸຍາດຂຸດຄົ້ນປະຈຳປີ**

ບຸກຄົນ, ນິຕິບຸກຄົນ ທີ່ມີຈຸດປະສົງໃນການຂໍຕໍ່ໃບອະນຸຍາດດຳເນີນກິດຈະການຂຸດຄົ້ນ ດິນດຳ-ດິນແດງ ໃນເຂດສຳປະທານເນື້ອທີ່ເດີມ, ຕ້ອງໄດ້ຍື່ນຄຳຮ້ອງຫາພະແນກພະລັງງານ ແລະ ບໍ່ແຮ່ແຂວງ ຫຼື ຫ້ອງການພະລັງງານ ແລະ ບໍ່ແຮ່ເມືອງ, ນະຄອນ ກ່ອນໃບອະນຸຍາດຈະໝົດອາຍຸ ສາມສິບ ວັນລັດຖະການ, ເຊິ່ງຈະຕ້ອງໄດ້ປະກອບເອກະສານ ດັ່ງນີ້:

1. ໃບຄຳຮ້ອງຂໍຕໍ່;
2. ໜັງສືລາຍງານການຈັດຕັ້ງປະຕິບັດຜ່ານມາເຊັ່ນ: ການມອບພັນທະ (ໃບຮັບເງິນ) ການຟື້ນຟູເນື້ອທີ່ການຊົດເຊີຍເນື້ອທີ່ດິນສຳປະທານ;
3. ສຳເນົາໃບທະບຽນວິສາຫະກິດ;
4. ສຳເນົາເອກະສານຕ່າງໆກ່ຽວກັບການນຳໃຊ້ທີ່ດິນ;
5. ແຜນທີ່ສະແດງຈຸດທີ່ຕັ້ງ ແລະ ລາຍລະອຽດຂອງພື້ນທີ່ຂຸດຄົ້ນ;
6. ບັນຊີພາຫະນະກົນຈັກ, ແຮງງານ ແລະ ເງິນເດືອນ;
7. ແຜນການຜະລິດ ແລະ ການຈຳໜ່າຍ;
8. ແຜນການມອບພັນທະຕ່າງໆ.

## ໝວດທີ 4
## ສິດ, ໜ້າທີ່ ແລະ ພັນທະຂອງຜູ້ໄດ້ຮັບອະນຸຍາດຂຸດຄົ້ນ ດິນດຳ-ດິນແດງ

**ມາດຕາ 13 ສິດ ແລະ ໜ້າທີ່ຂອງຜູ້ໄດ້ຮັບອະນຸຍາດຂຸດຄົ້ນ**

1. ດຳເນີນການຂຸດຄົ້ນຕາມຂອບເຂດທີ່ໄດ້ຮັບອະນຸຍາດ;
2. ເປັນເຈົ້າກຳມະສິດຕໍ່ຊັບສິນທີ່ໄດ້ມາຈາກການດຳເນີນກິດຈະການຂຸດຄົ້ນ ດິນດຳ-ດິນແດງ;

3. ຕ້ອງຂຸດຄົ້ນໃຫ້ຖືກຕາມແຜນດຳເນີນງານຂອງກຳມະວິທີການຂຸດຄົ້ນ ແລະ ຮັບປະກັນມາດຖານທາງດ້ານເຕັກນິກ ທີ່ລະບຸໄວ້ຢູ່ໃນມາດຕາ 10 ຂອງຂໍ້ຕົກລົງສະບັບນີ້;

4. ສະເໜີໂຈະການເຄື່ອນໄຫວຊົ່ວຄາວ, ສະເໜີສົ່ງຄືນເນື້ອທີ່ຕໍ່ຂະແໜງການພະລັງງານ ແລະ ບໍ່ແຮ່ ໃນກໍລະນີທີ່ມີເຫດສຸດວິໄສເກີດຂຶ້ນຊຶ່ງພາໃຫ້ຕົນບໍ່ສາມາດດຳເນີນກິດຈະການໄດ້;

5. ມີສິດພົວພັນໃນການປະສານສົມທົບທີ່ດິນບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງເຂົ້າໄປຫາເຂດຂໍສຳປະທານເພື່ອສ້າງເງື່ອນໄຂອຳນວຍຄວາມສະດວກ ໃນການເຄື່ອນໄຫວດຳເນີນກິດຈະການ ແລະ ເຈົ້າໜ້າທີ່ຕິດຕາມກວດກາ;

6. ນຳໃຊ້ແຮງງານທ້ອງຖິ່ນໃຫ້ຫຼາຍ ຮັບປະກັນຄວາມປອດໄພ, ສຸຂະພາບ, ດ້ານສະຫວັດດີການສັງຄົມ ແລະ ນະໂຍບາຍດ້ານອື່ນໆ ຕໍ່ຜູ້ອອກແຮງງານ;

7. ການຂົນສົ່ງຕ້ອງມີມາດຕະການເພື່ອຫຼຸດຜ່ອນຝຸ່ນລະອອງ, ຄວັນຢູ່ບ່ອນຊຸມຊົນ, ບໍ່ກີດຂວາງການສັນຈອນ, ບໍ່ສ້າງຄວາມເປິເປື້ອນ, ບໍ່ສ້າງຄວາມເສຍຫາຍແກ່ບຸກຄົນອື່ນ, ອາຄານ ແລະ ສະຖານທີ່ຕ່າງໆ;

8. ຕ້ອງໄດ້ປະຕິບັດມາດຕະການຄວາມປອດໄພ ຄວາມເປັນລະບຽບຮຽບຮ້ອຍ ເພື່ອປ້ອງກັນອັນຕະລາຍໃນເວລາດຳເນີນການຂຸດຄົ້ນ;

9. ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນຕາມກົດໝາຍ;

10. ຕ້ອງລາຍງານຕໍ່ອົງການຄຸ້ມຄອງ ກໍຄືພະແນກພະລັງງານ ແລະ ບໍ່ແຮ່ແຂວງ ຮັບຊາບ ພາຍຫຼັງສຳເລັດການຂຸດຄົ້ນແລ້ວ.

**ມາດຕາ 14 ພັນທະຂອງຜູ້ໄດ້ຮັບອະນຸຍາດຂຸດຄົ້ນ**

ບຸກຄົນ, ນິຕິບຸກຄົນໄດ້ຮັບອະນຸຍາດຂຸດຄົ້ນມີພັນທະດັ່ງນີ້:

1. ກ່ອນຈະລົງມືຂຸດຄົ້ນຕ້ອງແຈ້ງໃຫ້ອົງການຄຸ້ມຄອງທີ່ໄດ້ອອກອະນຸຍາດຮັບຊາບ;

2. ຕ້ອງຂຸດຄົ້ນໃຫ້ຖືກຕ້ອງຕາມລະບຽບເອກະສານການອະນຸຍາດ, ກໍລະນີມີການປ່ຽນແປງຕ້ອງໄດ້ຮັບອະນຸຍາດຕາມລະບຽບການຄືນໃໝ່;

3. ເວລາຂຸດຄົ້ນເຈົ້າຂອງກິດຈະການຕ້ອງໄດ້ສົມທົບກັບ ຂະແໜງການພະລັງງານ ແລະ ບໍ່ແຮ່, ພາກສ່ວນທີ່ກ່ຽວຂ້ອງ ເພື່ອອຳນວຍຄວາມສະດວກໃນການຈັດຕັ້ງປະຕິບັດ;

4. ຕ້ອງໃຫ້ຄວາມຮ່ວມມື, ສະໜອງຂໍ້ມູນທີ່ກ່ຽວຂ້ອງ ແລະ ປະຕິບັດຕາມການແນະນຳຂອງເຈົ້າໜ້າທີ່ອົງການຄຸ້ມຄອງການຂຸດຄົ້ນ ດິນດຳ-ດິນແດງ;

5. ເສຍຄ່າສຳປະທານທີ່ດິນ, ຄ່າຊົດເຊີຍພະຍາກອນ, ພາສີ, ອາກອນ, ຄ່າທຳນຽມ, ຄ່າບໍລິການ ແລະ ພັນທະອື່ນໆ ຕາມກົດໝາຍ ແລະ ລະບຽບການທີ່ວາງອອກ;

6. ປະຕິບັດແຜນການຄຸ້ມຄອງ, ຕິດຕາມກວດກາດ້ານສິ່ງແວດລ້ອມ-ສັງຄົມ ແລະ ແຜນການປິດບໍ່;

7. ສະຫຼຸບລາຍງານການຂຸດຄົ້ນປະຈຳເດືອນ, ປະຈຳງວດ ແລະ ປະຈຳປີ ລວມທັງ ບັນຊີ-ການເງິນ ຕໍ່ຂະແໜງການພະລັງງານ ແລະ ບໍ່ແຮ່.

**ມາດຕາ 15 ຄ່າທຳນຽມ ແລະ ຄ່າບໍລິການ**

ການເສຍຄ່າທຳນຽມ ແລະ ຄ່າບໍລິການໃຫ້ປະຕິບັດຕາມລັດຖະບັນຍັດຂອງປະທານປະເທດແຫ່ງ ສປປ ລາວ ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການທີ່ປະກາດໃຊ້ໃນແຕ່ລະໄລຍະ.

**ມາດຕາ 16 ຄ່າຊົດເຊີຍພະຍາກອນການຂຸດຄົ້ນ ດິນດຳ-ດິນແດງ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ໄດ້ຮັບອະນຸຍາດຂຸດຄົ້ນຕ້ອງໄດ້ຈ່າຍຄ່າຊົດເຊີຍພະຍາກອນທຳມະຊາດ ຕາມລັດຖະບັນຍັດຂອງປະທານປະເທດແຫ່ງ ສປປ ລາວ ທີ່ປະກາດໃຊ້ໃນແຕ່ລະໄລຍະ.

## ໝວດທີ 5
## ຂໍ້ຫ້າມ

**ມາດຕາ 17 ຂໍ້ຫ້າມສໍາລັບບຸກຄົນທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງມີພຶດຕິກໍາດັ່ງນີ້:

1. ດໍາເນີນການຂຸດຄົ້ນ ດິນດໍາ-ດິນແດງ ໂດຍບໍ່ໄດ້ຮັບອະນຸຍາດ ຈາກຂະແໜງການທີ່ກ່ຽວຂ້ອງ;

2. ບໍ່ອະນຸຍາດໃຫ້ຜູ້ປະກອບການຂຸດຄົ້ນ ດິນດໍາ-ດິນແດງ ໃນຕອນດິນຂອງຕົນໂດຍບໍ່ແຈ້ງໃຫ້ຂະແໜງການທີ່ກ່ຽວຂ້ອງຮັບຮູ້ນໍາ;

3. ສ້າງຄວາມປັ່ນປ່ວນ, ຍຸແຍ່ໃຫ້ເຈົ້າໜ້າທີ່ ຂະແໜງການທີ່ກ່ຽວຂ້ອງ ກັບຜູ້ຂຸດຄົ້ນ ດິນດໍາ-ດິນແດງ ເກີດມີຂໍ້ຂັດແຍ່ງ, ສ້າງຄວາມສັບສົນ-ວຸ້ນວາຍໃຫ້ແກ່ສັງຄົມ;

4. ສົມຮູ້ຮ່ວມຄິດກັບເຈົ້າໜ້າທີ່ ຫຼື ຜູ້ຂຸດຄົ້ນ ດິນດໍາ-ດິນແດງ ເພື່ອຫາຜົນປະໂຫຍດຮ່ວມກັນ;

5. ສ້າງອຸປະສັກກີດຂວາງ, ເມີນເສີຍ ຫຼື ແຊກແຊງວຽກງານການຂຸດຄົ້ນ ແລະ ໃຊ້ຄວາມຮຸນແຮງ ບັງຄັບ, ນາບຂູ່, ໃສ່ຮ້າຍປ້າຍສີ, ໝິ່ນປະໝາດເຈົ້າໜ້າທີ່ພະນັກງານ ຫຼື ຜູ້ຂຸດຄົ້ນ;

6. ມີພຶດຕິກໍາອື່ນທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 18 ຂໍ້ຫ້າມສໍາລັບຜູ້ຂຸດຄົ້ນ ດິນດໍາ-ດິນແດງ**

ຫ້າມຜູ້ຂຸດຄົ້ນ ດິນດໍາ-ດິນແດງ ມີພຶດຕິກໍາດັ່ງນີ້:

1. ຂຸດຄົ້ນກວມເອົາເຂດສະຫງວນຕ່າງໆເຊັ່ນ: ແຫຼ່ງວັດຖຸບູຮານ, ສະຖານທີ່ສໍາຄັນທາງດ້ານປະຫວັດສາດເຂດສະຫງວນແຫຼ່ງນໍ້າ ແລະ ເຂດອະນຸລັກອື່ນໆ...

2. ຂຸດຄົ້ນ ດິນດໍາ-ດິນແດງ ໃນເຂດປ່າສະຫງວນ, ເຂດປ່າຜະລິດ, ເຂດປ່າປ້ອງກັນ, ເຂດຍຸດທະສາດການທະຫານ, ລະບົບນິເວດວິທະຍາ ແລະ ສິ່ງແວດລ້ອມທໍາມະຊາດ-ສັງຄົມ ໂດຍບໍ່ໄດ້ຮັບອະນຸຍາດ;

3. ຂຸດຄົ້ນ ດິນດໍາ-ດິນແດງ ເກີນກວ່າທີ່ໄດ້ຮັບອະນຸຍາດ;

4. ຊື້-ຂາຍ, ມອບ-ໂອນໃບອະນຸຍາດຂຸດຄົ້ນໂດຍບໍ່ໄດ້ຮັບອະນຸຍາດຈາກຂະແໜງການພະລັງງານ ແລະ ບໍ່ແຮ່;

5. ບໍ່ໃຫ້ເອົາໃບອະນຸຍາດຂຸດຄົ້ນ ດິນດໍາ-ດິນແດງ ຂອງຕົນໄປໃຫ້ຜູ້ອື່ນນໍາໃຊ້;

6. ຂຸດຄົ້ນ ດິນດໍາ-ດິນແດງ ທີ່ບໍ່ສອດຄ່ອງກັບຂໍ້ຕົກລົງສະບັບນີ້;

7. ປອມແປງໃບອະນຸຍາດການຂຸດຄົ້ນ ດິນດໍາ-ດິນແດງ;

8. ດໍາເນີນການຂຸດຄົ້ນ ໂດຍບໍ່ໄດ້ຮັບອະນຸຍາດຈາກຂະແໜງການພະລັງງານ ແລະ ບໍ່ແຮ່;

9. ຫ້າມແອບອ້າງຊື່ຜູ້ອື່ນ ເພື່ອນາບຂູ່ພະນັກງານ, ເຈົ້າໜ້າທີ່ກວດກາບໍ່ແຮ່ ແລະ ປະຊາຊົນ.

**ມາດຕາ 19 ຂໍ້ຫ້າມສໍາລັບພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ຄຸ້ມຄອງການຂຸດຄົ້ນ**

ຫ້າມພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ກວດກາການຂຸດຄົ້ນ ດິນດໍາ-ດິນແດງ ມີພຶດຕິກໍາດັ່ງນີ້:

1. ສວຍໃຊ້ໜ້າທີ່, ຕໍາແໜ່ງເພື່ອຫາຜົນປະໂຫຍດສ່ວນຕົວຈາກວຽກງານຄຸ້ມຄອງການຂຸດຄົ້ນ ດິນດໍາ-ດິນແດງ;

2. ເມີນເສີຍ, ປະລະໜ້າທີ່ວຽກງານຄຸ້ມຄອງການຂຸດຄົ້ນທີ່ຖືກມອບໝາຍໃຫ້;

3. ກົດໜ່ວງຖ່ວງດຶງເອກະສານໃນກິດຈະການຂຸດຄົ້ນ ດິນດໍາ-ດິນແດງ;

4. ປອມແປງລາຍເຊັນ, ຕາປະທັບເພື່ອຫາຜົນປະໂຫຍດແກ່ຕົນເອງ;

5. ເປີດເຜີຍຄວາມລັບທາງດ້ານເອກະສານຂໍ້ມູນກ່ຽວກັບດິນດຳ-ດິນແດງ ໂດຍບໍ່ໄດ້ຮັບອະນຸຍາດ;

6. ເກັບຄ່າທຳນຽມ, ຄ່າບໍລິການ ແລະ ຄ່າຊັບພະຍາກອນທີ່ບໍ່ຖືກຕ້ອງຕາມລະບຽບກົດໝາຍ;

7. ມີພຶດຕິກຳທີ່ເປັນການລະເມີດກົດໝາຍ.

## ໝວດທີ 6
## ອົງການຄຸ້ມຄອງການຂຸດຄົ້ນ ດິນດຳ-ດິນແດງ

### ມາດຕາ 20 ອົງການຄຸ້ມຄອງການຂຸດຄົ້ນ

ການຄຸ້ມຄອງການຂຸດຄົ້ນ ດິນດຳ-ດິນແດງ ພາຍໃນແຂວງ ແມ່ນອົງການປົກຄອງແຂວງ ເປັນຜູ້ຄຸ້ມຄອງຢ່າງລວມສູນໃນຂອບເຂດທົ່ວແຂວງ, ໂດຍມອບໃຫ້ພະແນກພະລັງງານ ແລະ ບໍ່ແຮ່ແຂວງ, ຄະນະກຳມະການກ່ຽວຂ້ອງຄຸ້ມຄອງການຂຸດຄົ້ນ ດິນດຳ-ດິນແດງ ຂັ້ນແຂວງເປັນຜູ້ຄຸ້ມຄອງໂດຍກົງ ແລະ ເປັນໃຈກາງໃນການປະສານສົມທົບກັບພາກສ່ວນກ່ຽວຂ້ອງ ຊຶ່ງປະກອບດ້ວຍ:

1. ຂັ້ນແຂວງແມ່ນພະແນກພະລັງງານ ແລະ ບໍ່ແຮ່ແຂວງ;
2. ຂັ້ນເມືອງແມ່ນຫ້ອງການພະລັງງານ ແລະ ບໍ່ແຮ່ເມືອງ, ນະຄອນ;
3. ຂັ້ນບ້ານແມ່ນອົງການປົກຄອງບ້ານ;
4. ຂະແໜງການອື່ນ.

### ມາດຕາ 21 ສິດ ແລະ ໜ້າທີ່ຂອງພະແນກພະລັງງານ ແລະ ບໍ່ແຮ່ແຂວງ

ພະແນກພະລັງງານ ແລະ ບໍ່ແຮ່ແຂວງ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ໂຄສະນາເຜີຍແຜ່ ຂໍ້ຕົກລົງຂອງທ່ານເຈົ້າແຂວງ ກ່ຽວກັບການຄຸ້ມຄອງ ດິນດຳ-ດິນແດງ ທີ່ພົວພັນກັບກິດຈະການຂຸດຄົ້ນ ດິນດຳ-ດິນແດງ ໃຫ້ພະນັກງານລັດຖະກອນ ແລະ ຜູ້ປະກອບການຕະຫຼອດຮອດປະຊາຊົນບັນດາເຜົ່າມີຄວາມເຂົ້າໃຈ ແລະ ຮັບຮູ້ຢ່າງຈະແຈ້ງ;

2. ປະຕິບັດກົດໝາຍ ແລະ ລະບຽບການອື່ນກ່ຽວກັບການຄຸ້ມຄອງການຂຸດຄົ້ນ ດິນດຳ-ດິນແດງ;

3. ພະແນກພະລັງງານ ແລະ ບໍ່ແຮ່ແຂວງ ພິຈາລະນາອອກໃບອະນຸຍາດຂຸດຄົ້ນ ດິນດຳ-ດິນແດງ ທີ່ມີບໍລິມາດການຂຸດຄົ້ນແຕ່ ຊາວພັນ ແມັດກ້ອນ ຫາ ໜຶ່ງແສນ ແມັດກ້ອນ ຕໍ່ປີ, ເນື້ອທີ່ສຳປະທານບໍ່ເກີນ ສີ່ເຮັກຕາ;

4. ຊີ້ນຳ, ຄຸ້ມຄອງ, ຊຸກຍູ້ການຈັດຕັ້ງປະຕິບັດວຽກງານການອະນຸຍາດການຂຸດຄົ້ນໃນທົ່ວແຂວງ;

5. ອອກອະນຸຍາດ ແລະ ຢັ້ງຢືນຄວາມຖືກຕ້ອງລວມທັງຄ່າປັບໃໝຕ່າງໆຕາມລະບຽບກົດໝາຍ;

6. ຊຸກຍູ້, ສົ່ງເສີມ ແລະ ແນະນຳຫົວໜ່ວຍກິດຈະການຂຸດຄົ້ນທີ່ມີຢູ່ໃນປະຈຸບັນ ໃຫ້ມີການຈັດຕັ້ງປະຕິບັດສອດຄ່ອງຕາມຂໍ້ຕົກລົງສະບັບນີ້;

7. ເກັບກຳຂໍ້ມູນສະຖິຕິ, ກວດກາການປະຕິບັດລະບຽບການຄຸ້ມຄອງການຂຸດຄົ້ນ ດິນດຳ-ດິນແດງ ພາຍໃນແຂວງ;

8. ຄິດໄລ່ ແລະ ອອກໃບແຈ້ງ ໃຫ້ແກ່ຜູ້ປະກອບການ ໄປມອບຄ່າສຳປະທານເນື້ອທີ່ຢູ່ຂະແໜງຄຸ້ມຄອງ ຊັບສິນລັດແຂວງ (ພະແນກການເງິນແຂວງ) ຕາມລະບຽບການຄິດໄລ່ຄ່າສຳປະທານແມ່ນນັບແຕ່ມື້ອອກໃບອະນຸຍາດສຳປະທານມີຜົນສັກສິດເປັນຕົ້ນໄປ;

9. ເກັບຄ່າທຳນຽມ, ຄ່າບໍລິການໃນການອອກໃບອະນຸຍາດການຂຸດຄົ້ນ ດິນດຳ-ດິນແດງ;

10. ສະເໜີຕໍ່ທ່ານເຈົ້າແຂວງເພື່ອພິຈາລະນາໂຈະ ຫຼື ລຶບລ້າງກິດຈະການຂຸດຄົ້ນ ດິນດຳ-ດິນແດງ ທີ່ບໍ່ມີການເຄື່ອນໄຫວ ຫຼື ເຄື່ອນໄຫວບໍ່ຖືກຕ້ອງຕາມລະບຽບການ;

11. ສະຫຼຸບ ແລະ ລາຍງານຜົນຂອງການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງ ດິນດໍາ-ດິນແດງ ພາຍໃນຄວາມຮັບຜິດຊອບຂອງຕົນໃຫ້ສາຍຕັ້ງ ແລະ ສາຍຂວາງເປັນປົກກະຕິ;

12. ປະຕິບັດສິດ ໜ້າທີ່ອື່ນກ່ຽວກັບການຄຸ້ມຄອງການຂຸດຄົ້ນ ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 22 ສິດ ແລະ ໜ້າທີ່ຂອງຫ້ອງການພະລັງງານ ແລະ ບໍ່ແຮ່ເມືອງ, ນະຄອນ**

ຫ້ອງການພະລັງງານ ແລະ ບໍ່ແຮ່ເມືອງ, ນະຄອນ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ໂຄສະນາເຜີຍແຜ່ ຂໍ້ຕົກລົງຂອງທ່ານເຈົ້າແຂວງ ກ່ຽວກັບການຄຸ້ມຄອງ ດິນດໍາ-ດິນແດງ ທີ່ພົວພັນກັບກິດຈະການຂຸດຄົ້ນ ດິນດໍາ-ດິນແດງ ໃຫ້ພະນັກງານລັດຖະກອນ, ຜູ້ປະກອບການຕະຫຼອດຮອດປະຊາຊົນບັນດາເຜົ່າໃຫ້ມີຄວາມເຂົ້າໃຈ ແລະ ຮັບຮູ້ຢ່າງຈະແຈ້ງ;

2. ຫ້ອງການພະລັງງານ ແລະ ບໍ່ແຮ່ເມືອງ, ນະຄອນ ພິຈາລະນາອອກໃບອະນຸຍາດຂຸດຄົ້ນ ດິນດໍາ-ດິນແດງ ທີ່ມີບໍລິມາດການຂຸດຄົ້ນຕໍ່າກວ່າ ຊາວພັນ ແມັດກ້ອນລົງມາຕໍ່ປີ, ເນື້ອທີ່ສໍາປະທານບໍ່ເກີນ ສອງເຮັກຕາ;

3. ຄຸ້ມຄອງ, ຊຸກຍູ້, ສົ່ງເສີມ ແລະ ແນະນໍາໃຫ້ຫົວໜ່ວຍກິດຈະການຂຸດຄົ້ນ ພາຍໃນເມືອງທີ່ມີຢູ່ໃນປະຈຸບັນໃຫ້ມີການຈັດຕັ້ງປະຕິບັດສອດຄ່ອງຕາມຂໍ້ຕົກລົງສະບັບນີ້;

4. ເກັບກໍາຂໍ້ມູນສະຖິຕິ, ກວດກາການປະຕິບັດລະບຽບການຄຸ້ມຄອງການຂຸດຄົ້ນ ດິນດໍາ-ດິນແດງ ໃນຂອບເຂດເມືອງອອກ ແລະ ຕໍ່ໃບອະນຸຍາດ ຕາມການແບ່ງຂັ້ນຄຸ້ມຄອງ;

5. ຄິດໄລ່ ແລະ ອອກໃບແຈ້ງໃຫ້ແກ່ຜູ້ປະກອບການໄປມອບຄ່າສໍາປະທານເນື້ອທີ່ຢູ່ຫ້ອງການເງິນເມືອງຕາມລະບຽບການ ໃນນັ້ນການຄິດໄລ່ຄ່າສໍາປະທານແມ່ນນັບແຕ່ມື້ອອກໃບອະນຸຍາດສໍາປະທານມີຜົນສັກສິດເປັນຕົ້ນໄປ;

6. ເກັບຄ່າທໍານຽມ, ຄ່າບໍລິການໃນການອອກໃບອະນຸຍາດການຂຸດຄົ້ນ ດິນດໍາ-ດິນແດງ;

7. ສະເໜີຕໍ່ທ່ານເຈົ້າເມືອງເພື່ອພິຈາລະນາໂຈະ ຫຼື ລົບລ້າງ ກິດຈະການຂຸດຄົ້ນ ດິນດໍາ-ດິນແດງ ທີ່ບໍ່ມີການເຄື່ອນໄຫວ ຫຼື ເຄື່ອນໄຫວບໍ່ຖືກຕ້ອງຕາມລະບຽບການ;

8. ສະຫຼຸບ ແລະ ລາຍງານຜົນຂອງການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງການຂຸດຄົ້ນ ດິນດໍາ-ດິນແດງ ພາຍໃນຄວາມຮັບຜິດຊອບຂອງຕົນໃຫ້ສາຍຕັ້ງ ແລະ ສາຍຂວາງເປັນປົກກະຕິ;

9. ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 23 ສິດ ແລະ ໜ້າທີ່ຂອງອົງການປົກຄອງບ້ານ**

ອົງການປົກຄອງບ້ານມີສິດ ແລະ ໜ້າທີ່ດັ່ງນີ້:

1. ໂຄສະນາເຜີຍແຜ່ ຂໍ້ຕົກລົງກ່ຽວກັບການຄຸ້ມຄອງດິນດໍາ-ດິນແດງ ໃຫ້ຜູ້ປະກອບການ ແລະ ປະຊາຊົນພາຍໃນບ້ານທີ່ຕົນຮັບຜິດຊອບໃຫ້ມີຄວາມເຂົ້າໃຈ ແລະ ຮັບຮູ້ຢ່າງຈະແຈ້ງ;

2. ຊຸກຍູ້, ສົ່ງເສີມ ແລະ ແນະນໍາຫົວໜ່ວຍກິດຈະການຂຸດຄົ້ນທີ່ມີຢູ່ໃນຂອບເຂດການຄຸ້ມຄອງຂອງບ້ານໃຫ້ມີການຈັດຕັ້ງປະຕິບັດສອດຄ່ອງຕາມຂໍ້ຕົກລົງສະບັບນີ້;

3. ເກັບກໍາຂໍ້ມູນສະຖິຕິ, ກວດກາ ການປະຕິບັດລະບຽບການຄຸ້ມຄອງການຂຸດຄົ້ນ ດິນດໍາ-ດິນແດງໃນຂອບເຂດບ້ານ ຕາມການແບ່ງຂັ້ນຄຸ້ມຄອງ;

4. ເປັນເຈົ້າການໃນການຕິດຕາມກວດກາບັນດາເອກະສານທີ່ກ່ຽວພັນໃນການຂຸດຄົ້ນ ດິນດໍາ-ດິນແດງ;

5. ສະເໜີຕໍ່ທ່ານເຈົ້າເມືອງ, ເຈົ້ານະຄອນ, ຫ້ອງການພະລັງງານ ແລະ ບໍ່ແຮ່ເມືອງ ແລະ ຂະແໜງການທີ່ກ່ຽວຂ້ອງເພື່ອຮັບຊາບ ກ່ຽວກັບການເຄື່ອນໄຫວ ຫຼື ເຄື່ອນໄຫວບໍ່ຖືກຕ້ອງຕາມລະບຽບການ;

6. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 24 ສິດ ແລະ ໜ້າທີ່ຂອງຂະແໜງການອື່ນ**

ສິດ ແລະ ໜ້າທີ່ຂອງຂະແໜງການອື່ນ ມີດັ່ງນີ້:

1. ມີສ່ວນຮ່ວມຕິດຕາມກວດກາ ແລະ ຊຸກຍູ້ຜູ້ດຳເນີນກິດຈະການຂຸດຄົ້ນ ດິນດຳ-ດິນແດງ ໃຫ້ເຄື່ອນໄຫວຖືກຕ້ອງຕາມຂໍ້ຕົກລົງຂອງທ່ານເຈົ້າແຂວງສະບັບນີ້ ແລະ ສ່ອງແສງ ສະທ້ອນໃຫ້ຂະແໜງການທີ່ກ່ຽວຂ້ອງຊາບ ເມື່ອກວດກາພົບເຫັນການຂຸດຄົ້ນບໍ່ຖືກຕ້ອງ ສ້າງຄວາມເສຍຫາຍໃຫ້ແກ່ສ່ວນລວມ;

2. ຊຸກຍູ້, ສົ່ງເສີມ ແລະ ແນະນຳຫົວໜ່ວຍກິດຈະການຂຸດຄົ້ນ ດິນດຳ-ດິນແດງ ໃຫ້ມີການຈັດຕັ້ງປະຕິບັດສອດຄ່ອງຕາມຂໍ້ຕົກລົງສະບັບນີ້;

3. ເຂົ້າຮ່ວມແກ້ໄຂບັນຫາໃນເມື່ອມີຂໍ້ຂັດແຍ່ງເກີດຂຶ້ນ;

4. ເກັບກຳຂໍ້ມູນ, ຄຳສະເໜີຂອງບຸກຄົນ, ນິຕິບຸກຄົນ ແລະ ບັນດາຫົວໜ່ວຍກິດຈະການທີ່ເຄື່ອນໄຫວບໍ່ສອດຄ່ອງກັບຂໍ້ຕົກລົງສະບັບນີ້ມາກວດກາ, ຄົ້ນຄ້ວາ, ພິຈາລະນາຢ່າງພາວະວິໄສ ແລະ ແກ້ໄຂໃຫ້ໄດ້ຮັບຄວາມເປັນທຳ;

5. ເຂົ້າຮ່ວມຕິດຕາມ, ກວດກາ ຕາມການແຈ້ງເຊີນຂອງຂະແໜງການພະລັງງານ ແລະ ບໍ່ແຮ່;

6. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມການມອບໝາຍຂອງຂັ້ນເທິງ.

## ໝວດທີ 7
## ອົງການກວດກາ

**ມາດຕາ 25 ອົງການກວດກາ**

ອົງການກວດກາພາຍໃນ ແມ່ນອົງການດຽວກັນກັບອົງການຄຸ້ມຄອງ ທີ່ໄດ້ກຳນົດໄວ້ໃນມາດຕາ 20 ຕາມຂໍ້ຕົກລົງໃນສະບັບນີ້.

ອົງການກວດກາພາຍນອກ ແມ່ນສະພາປະຊາຊົນແຂວງ, ອົງການກວດກາລັດແຂວງ, ອົງການກວດສອບປະຈຳພາກ, ອົງການແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ສື່ມວນຊົນ ແລະ ພົນລະເມືອງ, ສ່ວນພາລະບົດບາດ ສິດ ແລະ ໜ້າທີ່ ແມ່ນກຳນົດໄວ້ໃນກົດໝາຍ ແລະ ລະບຽບການສະເພາະ.

**ມາດຕາ 26 ເນື້ອໃນການກວດກາ**

ເນື້ອໃນການກວດກາ ມີດັ່ງນີ້:

1. ກວດກາການປະຕິບັດກົດໝາຍ, ນະໂຍບາຍ, ຂໍ້ຕົກລົງ ແລະ ລະບຽບການກ່ຽວກັບການຂຸດຄົ້ນດິນດຳ-ດິນແດງ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ດຳເນີນການຂຸດຄົ້ນ ດິນດຳ-ດິນແດງ ໃນແຕ່ລະໄລຍະເພື່ອສະເໜີຂັ້ນເທິງ ແລະ ຂະແໜງການກ່ຽວຂ້ອງແກ້ໄຂຢ່າງທັນການ;

2. ກວດກາເພື່ອປະເມີນຜົນກະທົບຕໍ່ທຳມະຊາດ, ສິ່ງແວດລ້ອມ ແລະ ສັງຄົມ ຜ່ານການຂຸດຄົ້ນດິນດຳ-ດິນແດງ ເພື່ອມີມາດຕະການແກ້ໄຂທີ່ຖືກຕ້ອງ, ແນ່ໃສ່ປົກປ້ອງຜົນປະໂຫຍດລວມ ພ້ອມລາຍງານ ຂໍທິດຊີ້ນຳຈາກຂັ້ນເທິງຢ່າງທັນການ;

3. ກວດກາການຈັດຕັ້ງປະຕິບັດສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງພາກສ່ວນກ່ຽວຂ້ອງທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້;

4. ກວດກາຕາມການສະເໜີ, ການຮ້ອງຂໍຂອງປະຊາຊົນ ແລະ ການຈັດຕັ້ງຕໍ່ພຶດຕິກຳຂອງພະນັກງານ-ລັດຖະກອນ, ເຈົ້າໜ້າທີ່ຄຸ້ມຄອງການຂຸດຄົ້ນທີ່ລະເມີດລະບຽບກົດໝາຍ ແລະ ນິຕິກຳທີ່ກ່ຽວຂ້ອງ.

**ມາດຕາ 27 ຮູບການກວດກາ**

ຮູບການກວດກາການຂຸດຄົ້ນ ດິນດຳ-ດິນແດງ ມີດັ່ງນີ້:

1. ການກວດກາຕາມປົກກະຕິຊຶ່ງຮູບການກວດກາທີ່ດຳເນີນໄປຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາທີ່ແນ່ນອນ;

2. ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ ເປັນການກວດກາຕາມແຜນການເມື່ອເຫັນວ່າມີຄວາມຈຳເປັນຕ້ອງແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າໃນເວລາອັນແນ່ນອນ;

3. ການກວດກາແບບກະທັນຫັນ ແມ່ນການກວດກາຢ່າງຮີບດ່ວນໂດຍບໍ່ໄດ້ແຈ້ງໃຫ້ຮູ້ລ່ວງໜ້າໃນເວລາດຳເນີນການເຄື່ອນໄຫວຕິດຕາມກວດກາຕ້ອງປະຕິບັດຕາມກົດໝາຍ ແລະ ນິຕິກຳໃຕ້ກົດໝາຍຢ່າງເຂັ້ມງວດ.

## ໝວດທີ 8
## ການແກ້ໄຂຂໍ້ຂັດແຍ່ງ

**ມາດຕາ 28 ຮູບການແກ້ໄຂຂໍ້ຂັດແຍ່ງ**

ການແກ້ໄຂຂໍ້ຂັດແຍ່ງປະກອບດ້ວຍຮູບການ ດັ່ງນີ້:

1. ການໄກ່ເກ່ຍ ຫຼື ການປະນີປະນອມ;
2. ການແກ້ໄຂທາງດ້ານບໍລິຫານ;
3. ການແກ້ໄຂໂດຍຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
4. ການຕັດສິນຂອງສານ.

**ມາດຕາ 29 ການໄກ່ເກ່ຍ ຫຼື ການປະນີປະນອມ**

ໃນກໍລະນີມີຂໍ້ຂັດແຍ່ງເກີດຂຶ້ນ ຄູ່ກໍລະນີສາມາດແກ້ໄຂໂດຍປຶກສາຫາລືເຈລະຈາ, ໄກ່ເກ່ຍ ຫຼື ປະນີປະນອມກັນ, ຕົກລົງກັນ ໂດຍໃຫ້ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ.

**ມາດຕາ 30 ການແກ້ໄຂທາງດ້ານບໍລິຫານ**

ໃນກໍລະນີເກີດມີຂໍ້ຂັດແຍ່ງ ຄູ່ກໍລະນີບໍ່ສາມາດໄກ່ເກ່ຍດ້ວຍວິທີປະນີປະນອມກັນໄດ້, ຝ່າຍໃດຝ່າຍໜຶ່ງມີສິດສະເໜີຕໍ່ອົງການຄຸ້ມຄອງ ຫຼື ອົງການບໍລິຫານ ແຕ່ລະຂັ້ນບ່ອນທີ່ຕົນໄດ້ຮັບອະນຸຍາດນັ້ນເປັນຜູ້ພິຈາລະນາແກ້ໄຂ.

**ມາດຕາ 31 ການແກ້ໄຂໂດຍຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ໃນກໍລະນີເກີດຂໍ້ຂັດແຍ່ງກ່ຽວກັບການດຳເນີນກິດຈະການຄູ່ກໍລະນີຝ່າຍໃດໜຶ່ງມີສິດສະເໜີຕໍ່ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອພິຈາລະນາຕາມກົດໝາຍ.

**ມາດຕາ 32 ການແກ້ໄຂໂດຍການຕັດສິນຂອງສານ**

ໃນກໍລະນີມີຂໍ້ຂັດແຍ່ງເກີດຂຶ້ນ ຜ່ານການແກ້ໄຂດ້ວຍຮູບການອື່ນ ແຕ່ບໍ່ສາມາດແກ້ໄຂໄດ້ ຄູ່ກໍລະນີຝ່າຍໃດໜຶ່ງມີສິດຮ້ອງຟ້ອງຕໍ່ສານປະຊາຊົນ ເພື່ອພິຈາລະນາຕັດສິນຕາມກົດໝາຍ.

## ໝວດທີ 9
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 33 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດທີ່ມີຜົນງານດີເດັ່ນໃນການປະກອບສ່ວນເຄື່ອນໄຫວຈັດຕັ້ງປະຕິບັດວຽກງານການຄຸ້ມຄອງ, ການຮັກສາສະພາບແວດລ້ອມ ແລະ ການດຳເນີນການຂຸດຄົ້ນ ດິນດຳ-ດິນແດງ ຫຼື ໃຫ້ບໍລິການການຂຸດຄົ້ນ ດິນດຳ-ດິນແດງ ຢ່າງຖືກຕ້ອງຕາມຂໍ້ຕົກລົງສະບັບນີ້ຈະໄດ້ຮັບການຍ້ອງຍໍ ຫຼື ປະຕິບັດນະໂຍບາຍອື່ນໆຕາມຄວາມເໝາະສົມ.

**ມາດຕາ 34 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງພາຍໃນ ທີ່ລະເມີດຂໍ້ຕົກລົງສະບັບນີ້ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໄໝ, ຖອນໃບອະນຸຍາດໃນການດຳເນີນກິດຈະການ ແລະ ຈະຖືກດຳເນີນຄະດີຕາມລະບຽບກົດໝາຍ.

## ໝວດທີ10
## ບົດບັນຍັດສຸດທ້າຍ

**ມາດຕາ 35 ການຈັດຕັ້ງປະຕິບັດ**

ມອບໃຫ້ພະແນກພະລັງງານ ແລະ ບໍ່ແຮ່ແຂວງ, ຫ້ອງການພະລັງງານ ແລະ ບໍ່ແຮ່ເມືອງ, ນະຄອນ ເປັນໃຈກາງປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ມີປະສິດທິຜົນສູງ;

ພະແນກການ, ອົງການທຽບເທົ່າຂັ້ນແຂວງ, ຂັ້ນເມືອງ, ຂັ້ນນະຄອນ, ອົງການຈັດຕັ້ງທີ່ກ່ຽວຂ້ອງບຸກຄົນ, ນິຕິບຸກຄົນ, ທີ່ເຄື່ອນໄຫວພາຍໃນແຂວງຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 36 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າ ວັນເປັນຕົ້ນໄປ.

**ເຈົ້າແຂວງສະຫວັນນະເຂດ**

ສັນຕິພາບ ພົມວິຫານ